UNITED NATIONS
LAO PDR

# ກອງປະຊຸມປຶກສາຫາລືການກະກຽມກອງປະຊຸມໂຕະມົນ ປະຈຳປີ 2022
# 28 ຕຸລາ 2022

28 ຕຸລາ 2022
ໂຮງແຮມເມືອງແທງ
ນະຄອນຫຼວງວຽງຈັນ, ສປປ ລາວ

ທ່ານ ສີສົມພອນ ເພັດດາວເຮືອງ
ຮອງຫົວໜ້າກົມຮ່ວມມືສາກົນ
ກະຊວງແຜນການ ແລະ ການລົງທຶນ

USAID
FROM THE AMERICAN PEOPLE

UNDP

# *ບົດນຳສະເໜີ 1:*

## ແຈ້ງການຜັນຂະຫຍາຍຜົນຂອງກອງປະຊຸມ ໂຕະມົນລະດັບສູງ ຄັ້ງທີ XIII ປີ 2021 (ແຈ້ງການເລກທີ 0320/ກຜທ)

# ເນື້ອໃນນຳສະເໜີ

1. ແຈ້ງການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIII ປີ 2021 (ແຈ້ງການເລກທີ 0320/ກຜທ);

2. ຖາມຕອບ ແລະ ປຶກສາຫາລື

**1) ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບ ກະຊວງການເງິນ, ກະຊວງການຕ່າງປະເທດ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ກະຊວງອຸດສາຫະກຳແລະການຄ້າ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ສຶກສາທິການ ແລະ ກິລາ, ກະຊວງ ສາທາລະນະສຸກ ດັ່ງນີ້:**

- ຜັນຂະຫຍາຍເປົ້າໝາຍ, ຈຸດປະສົງ ແລະ ບູລິມະສິດຕ່າງໆ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃຫ້ເປັນແຜນດຳເນີນງານອັນລະອຽດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ການອອກຈາກສະຖານະພາບປະເທດດ້ອຍພັດທະນາ;

- ສຸມໃສ່ໃຫ້ສຳເລັດຍຸດທະສາດດ້ານການເງິນ, ການຕິດຕາມ, ປະເມີນຜົນ, ຄຸ້ມຄອງລະບົບຂໍ້ມູນຂ່າວສານ, ການສ້າງນະໂຍບາຍຕ່າງໆ ແລະ ການຕິດຕາມຄວາມຄືບໜ້າ, ການຈັດຕັ້ງປະຕິບັດນະໂຍບາຍຕ່າງໆ, ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.

## ❖ ແຫຼ່ງການເງິນເພື່ອການພັດທະນາແບບຍືນຍົງ ແລະ ການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ

- ເພີ່ມທະວີການຄຸ້ມຄອງໜີ້ສິນໃຫ້ມີຄວາມໂປ່ງໃສ ແລະ ຮັບປະກັນສະຖຽນລະພາບຂອງຂະແໜງການເງິນໃຫ້ມີຄວາມຍືນຍົງ.

## ❖ ຂະແໜງການຄ້າ ແລະ ພາກເອກະຊົນ ແລະ ການທ່ອງທ່ຽວ

- ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍແກ່ການດໍາເນີນທຸລະກິດ ແລະ ການລົງທຶນ ໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ ລວມທັງໃຫ້ມີການປຶກສາຫາລືຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

- ຊຸກຍູ້ການລະດົມການຊ່ວຍເຫຼືອທາງດ້ານທຶນຮອນ ເຂົ້າໃນການຟື້ນຟູຂະແໜງການທ່ອງທ່ຽວ ແລະ ການບໍລິການ ພ້ອມທັງ ສົ່ງເສີມໃຫ້ມີການເຊື່ອມຈອດທາງດ້ານເສດຖະກິດກັບບັນດາປະເທດພາກພື້ນ ແລະ ສາກົນ, ສຸມໃສ່ຊຸກຍູ້ໃຫ້ການສະໜັບສະໜູນ ກຸ່ມຊາວກະສິກອນຂະໜາດນ້ອຍ-ກາງ ແລະ ແມ່ຍິງ ໃນໄລຍະທີ່ມີຜົນກະທົບຈາກໂຄວິດ-19, ພ້ອມທັງ ສົ່ງເສີມສ້າງຂອບນະໂຍບາຍທາງດ້ານການຄ້າ ແບບເອເລັກໂທນິກ.

## ❖ ການຄຸ້ມຄອງການປ່ຽນແປງຕ່າງໆ ແລະ ການເພີ່ມທະວີຄວາມພ້ອມດ້ານນະໂຍບາຍສໍາລັບການສ້າງວຽກເຮັດງານທໍາທີ່ໝັ້ນຄົງ

- ສ້າງຄວາມເຂັ້ມແຂງໃຫ້ແກ່ສັງຄົມ ໃນການເປີດດໍາເນີນທຸລະກິດຄືນໃໝ່; ສ້າງ ແລະ ບັງຄັບໃຊ້ນະໂຍບາຍແຫ່ງຊາດ ແລະ ລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງຄ່າແຮງງານ, ການເຄື່ອນຍ້າຍແຮງງານ ແລະ ການຄຸ້ມຄອງດ່ານເຂົ້າ-ອອກຕ່າງໆ;

- ສ້າງຄວາມເຂັ້ມແຂງ ໃຫ້ແກ່ລະບົບການປົກປ້ອງສັງຄົມ ເພື່ອຕອບໂຕ້ກັບຜົນກະທົບຕ່າງໆ ໂດຍສະເພາະສຸມໃສ່ກຸ່ມຄົນທີ່ດ້ອຍໂອກາດ ທີ່ມີຄວາມສ່ຽງຈະໄດ້ຮັບຜົນທະທົບ;

- ສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມ ການເປັນຄູ່ຮ່ວມ ລະຫວ່າງ ພາກລັດ-ເອກະຊົນ ໃນການພັດທະນາທັກສະດ້ານລະບົບດີຈີຕອນ, ການຈ້າງງານໃນຂັ້ນທ້ອງຖິ່ນ ແລະ ການລົງທຶນເຂົ້າໃນພາກທຸລະກິດຂະໜາດນ້ອຍ ໂດຍສະເພາະເຂດຊົນນະບົດ ຫ່າງໄກສອກຫຼີກ.

## ❖ ການພັດທະນາຊັບພະຍາກອນມະນຸດ

- **ດ້ານການສຶກສາ:**

▪ ຄົ້ນຄວ້າໃຫ້ມີການເປີດການຮຽນ-ການສອນຄືນ ຢ່າງມີມາດຕະການປ້ອງກັນຄວາມປອດໄພ ແລະ ແກ້ໄຂຜົນເສຍຫາຍຂອງການຢຸດ ການຮຽນ-ການສອນຜ່ານມາ ໂດຍສະເພາະໃຫ້ການສະໜັບສະໜູນກຸ່ມຄົນຜູ້ດ້ອຍໂອກາດ ເພື່ອແກ້ໄຂບັນຫາອັດຕາການເຂົ້າໂຮງຮຽນຕ່ຳ ແລະ ອັດຕາການປະລະການຮຽນສູງ, ລວມທັງຮັບປະກັນດ້ານງົບປະມານ ສຳລັບຂະແໜງການສຶກສາ ໃຫ້ພຽງພໍ;

▪ ຄົ້ນຄວ້າເພີ່ມຈຳນວນໂຄຕ້າຄູສິດສອນ ທີ່ມີຄວາມຮູ້ຄວາມສາມາດໃນລະດັບທີ່ແນ່ນອນ ຕາມຄວາມຕ້ອງການຕົວຈິງ ໃນຂອບເຂດທົ່ວປະເທດ ແລະ ພັດທະນາແບບການຮຽນ-ການສອນ ຂັ້ນປະຖົມໃຫ້ສອດຄ່ອງກັບການໃຊ້ຊີວິດແບບໃໝ່ ໂດຍສະເພາະສົ່ງເສີມທັກສະດ້ານລະບົບດີຈີຕອນ;

▪ ເພີ່ມທະວີການສຶກສາກ່ອນໄວຮຽນ, ຄວາມພ້ອມທາງດ້ານໂຮງຮຽນ ເພື່ອຫຼຸດຜ່ອນການປະລະການຮຽນ ແລະ ຮັບປະກັນຄຸນນະພາບ ແລະ ປະສິດທິພາບຂອງການສຶກສາ ທຸກຊັ້ນຮຽນ.

- **ດ້ານສາທາລະນະສຸກ:**

▪ ສ້າງຄວາມເຂັ້ມແຂງ ແລະ ພູມຄຸ້ມກັນ ໃຫ້ແກ່ລະບົບສາທາລະນະສຸກຂັ້ນຕົ້ນ ເພື່ອການບໍລິການກວດສຸຂະພາບຢ່າງເປັນລະບົບ, ຄວາມອາດສາມາດໃນການປິ່ນປົວຜູ້ທີ່ຂາດສານອາຫານຢ່າງຮຸນແຮງ, ການວາງແຜນຄອບຄົວ, ດ້ານໂພສະນາການ ແລະ ຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ-19 ລວມທັງໃຫ້ການສະໜັບສະໜູນແກ່ສັງຄົມ ແລະ ບຸກຄົນໃຫ້ສາມາດປັບຕົວເຂົ້າກັບສະພາບຕົວຈິງໄດ້;

▪ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການເງິນສຳລັບຂະແໜງສາທາລະນະສຸກ ໃຫ້ມີຄວາມຍືນຍົງ ພ້ອມທັງຮັບປະກັນໃຫ້ມີການເຂົ້າເຖິງລະບົບສາທາລະນະສຸກຢ່າງສະເໝີພາບ.

- **ດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ**:

▪ ສົ່ງເສີມການລົງທຶນໃສ່ແຮງງານເພດຍິງ ໃຫ້ມີຄວາມສະເໝີພາບກັບເພດຊາຍ ໂດຍມີແຜນວຽກຮອງຮັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຢຸດການໃຊ້ຄວາມຮຸນແຮງກັບເພດຍິງ;

▪ ປັບປຸງການເຂົ້າເຖິງລະບົບປະກັນສັງຄົມ, ລະບົບການເບິ່ງແຍງເດັກນ້ອຍ, ນະໂຍບາຍພັກເກີດລູກ ແລະ ສົ່ງເສີມໃຫ້ມີການນຳໃຊ້ລະບົບຖານຂໍ້ມູນສະຖິຕິແຍກເພດ ຢ່າງເປັນລະບົບ.

## ❖ ການເຕີບໂຕສີຂຽວ, ປັບຕົວ ແລະ ການຄຸ້ມຄອງຄວາມສ່ຽງ

- ຮັບປະກັນໃຫ້ມີການນຳໃຊ້ອາຍກາກບອນໃນລະດັບຕ່ຳ ໃນການດຳເນີນທຸລະກິດ, ຊຸກຍູ້ໃຫ້ມີການຫັນມານຳໃຊ້ພະລັງງານສະອາດ, ສົ່ງເສີມການນຳໃຊ້ພະລັງງານທົດແທນສີຂຽວ, ສົ່ງເສີມການນຳໃຊ້ງົບປະມານ ແລະ ການໃຊ້ຈ່າຍ ໃນກິດຈະກຳທີ່ເປັນມິດກັບທຳມະຊາດ, ສົ່ງເສີມການຄຸ້ມຄອງຂີ້ເຫຍື້ອໃຫ້ມີຄວາມຍືນຍົງ, ຊຸກຍູ້ໃຫ້ມີລະບົບພື້ນຖານໂຄ່ງລ່າງ ໃນການຫັນປ່ຽນອຸດສາຫະກຳໄປສູ່ລະບົບສີຂຽວ;

- ເພີ່ມທະວີການສ້າງພູມຄຸ້ມກັນ ແລະ ການລົງທຶນເຂົ້າໃສ່ບັນດາຊຸມຊົນທ້ອງຖິ່ນ ເພື່ອປົກປ້ອງລະບົບນິເວດ ຊີວະນາໆພັນ-ສັດປ່າ, ສ້າງຄວາມເຂັ້ມແຂງໃຫ້ແກ່ພາກເອກະຊົນ, ລົງທຶນໃສ່ລະບົບຕ່ອງໂສ້ການສະໜອງ ແລະ ພື້ນຖານໂຄງລ່າງທີ່ທົນທານ ແລະ ສົ່ງເສີມດ້ານກະສິກຳ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ຍືນຍົງ;

- ສົ່ງເສີມລະບົບການຄຸ້ມຄອງຄວາມສ່ຽງຈາກໄພພິບັດທຳມະຊາດ, ການເຂົ້າເຖິງແຫຼ່ງທຶນເພື່ອຮັບມືກັບການປ່ຽນແປງດິນຟ້າອາກາດ; ສ້າງຄວາມເຂັ້ມແຂງ ແລະ ເຊື່ອມສານເອົາ ວຽກງານການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດທຳມະຊາດ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນວຽກປົ່ນອ້ອມຂອງບັນດາກະຊວງ, ຂະແໜງການ.

## 2) ໃຫ້ກະຊວງ ແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ, ຂະແໜງ ການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີເອົາໃຈໃສ່:

- ຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ພາຍໃຕ້ບັນຍາກາດທີ່ມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ, ມີຄວາມໂປ່ງໃສ ແລະ ມີຄວາມຮັບຜິດ ຊອບສູງຈາກພາກສ່ວນກ່ຽວຂ້ອງ;

- ຮັບປະກັນໃຫ້ທຸກພາກສ່ວນໄດ້ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 8 ຫຼັກການ ຂອງຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນດັ່ງກ່າວ ໂດຍສະເພາະ ລັດຖະບານ, ຄູ່ຮ່ວມພັດທະນາ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ໂດຍມີກົນໄກການຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດຢ່າງປົກກະຕິ;

- ການນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ມີປະສິດທິຜົນສູງສຸດ ໂດຍຜ່ານການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).

- ເພີ່ມທະວີຈັດຕັ້ງປະຕິບັດ ບັນດາ 14 ໜ້າວຽກຂອງແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ໃຫ້ບັນລຸຕາມເປົ້າໝາຍ. ປັບປຸງກົນໄກການຕິດຕາມ ແລະ ລາຍງານ ການຈັດຕັ້ງປະຕິບັດແຜນດຳເນີນງານ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ຫູ້ກການຮ່ວມມືເພື່ອການພັດທະນາໃນລະດັບສາກົນ;

- ສ້າງຄວາມເຂັ້ມແຂງ ແລະ ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ກ່ຽວກັບລະບົບການປະສານງານ, ການລາຍງານ ແລະ ການປະເມີນຄວາມອາດສາມາດ ໃຫ້ແກ່ ກອງເລຂາຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ແລະ ບັນດາໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ.

## 3) ໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ແລະບັນດາກະຊວງ/ຂະແໜງການ, ທ້ອງຖິ່ນແລະພາກສ່ວນກ່ຽວຂ້ອງເອົາໃຈ ໃສ່ດັ່ງນີ້:

1. **ວຽກງານການທົບທວນແຫ່ງຊາດແບບສະໝັກໃຈກ່ຽວກັບການຈັດຕັ້ງຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງ:**

- ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ເພື່ອຜັນຂະຫຍາຍວາລະການພັດທະນາໃຫ້ເປັນແຜນປະຕິບັດງານເປັນອັນລະອຽດ ຢູ່ທຸກຂັ້ນທັງສູນກາງ ແລະ ທ້ອງຖິ່ນ, ເພື່ອຮັບປະກັນປະສິດທິຜົນໃນການຈັດຕັ້ງປະຕິບັດວາລະການພັດທະນາແຫ່ງຊາດ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເປົ້າໝາຍການພັດທະນາແບບຍືນຍົງ, ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ການເຕີບໂຕສີຂຽວ;

- ປັບປຸງພາລະບົດບາດໃນການວາງແຜນ, ການຕິດຕາມ ແລະ ລາຍງານ ແລະ ສ້າງຄວາມຮັບຮູ້, ການເຂົ້າເຖິງ ແລະ ຄວາມເຂົ້າໃຈໃຫ້ແກ່ຊຸມຊົນທ້ອງຖິ່ນກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ, ບັນດາຕົວຊີ້ບອກ ແລະ ໂຄງການຊ່ວຍເຫຼືອຕ່າງໆໃນການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນແຜນພັດທະນາໃນທຸກຂັ້ນ;

- ເຊື່ອມສານແຫຼ່ງທຶນ ເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຢ່າງມີຈຸດສຸມ ເພື່ອໃຫ້ສອດຄ່ອງກັບສະພາບທາງດ້ານການເງິນທີ່ມີຄວາມຈຳກັດ.

## 2. ວຽກງານການສ້າງຍຸດທະສາດຂ້າມຜ່ານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ:

- ແກ້ໄຂບັນຫາຈາກການແຜ່ລະບາດຂອງພະຍາດໂຄວິດ-19 ລວມທັງຕິດຕາມຄວາມຄືບໜ້າໃນການບັນລຸເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ເຊັ່ນ: ດັດສະນີຊັບສິນມະນຸດ, ລາຍຮັບລວມແຫ່ງຊາດ ແລະ ດັດສະນີຄວາມບອບບາງທາງດ້ານເສດຖະກິດ ເພື່ອຮັບປະກັນໃຫ້ການຫຼຸດພົ້ນດັ່ງກ່າວຢູ່ໃນລະດັບທີ່ມີຄວາມຍືນຍົງ ແລະ ຢ່າງໜ້ອຍກໍ່ໃຫ້ຢູ່ໃນລະດັບທຽບເທົ່າກັບເງື່ອນໄຂໃນໄລຍະເວລາຂອງການຫຼຸດພົ້ນ;

- ສຸມໃສ່ສ້າງຍຸດທະສາດຂ້າມຜ່ານການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງ ຫຼ່ຽນໄຫຼ ທີ່ຜ່ານການປຶກສາຫາລືກັບທຸກພາກສ່ວນທີ່ກ່ຽວຂ້ອງ.

# ຂໍຂອບໃຈ



## *Presentation 2:*

# Concept Note for the 2022 Round Table Implementation Meeting (RTIM)

# Outline for Presentation 2

1. **Process and Timeline**

2. **RTIM Concept Note**
   - **2.1 Background**
   - **2.2 Objectives**
   - **2.3 Participation**
   - **2.4 Structure**

3. **Questions/ Discussions**

# Process and Timeline

# The 2022 RTIM timeline of activities

13th HL-RTM

2021

2022

Jan

Sep

Oct

Nov

Dec

...

2023

**Sep 28:** FS for 9th NSEDP validated at HL-Structured Dialogue

**Oct 18:** LDC STS Prioritization Workshop
**Oct 26:** Consultation on Resilience Framework
**Oct 28:** Consultation Meeting on the RTIM 2022 Preparations (technical level)

**Nov 3-4:** LDC STS Write shop (internal)
**Nov 16:** SWG Chairs/Co-chairs meeting (VDCAP)
**Nov 29:** RTIM

**Dec 1**
Briefing to the PM post-RTIM
**Dec 16**
Submission of the full report
**Jan 2023**
Issuance of PM Instructions on 2022 RTIM

RTP retreat/reflections on the outcomes of the RTIM 2022

Disseminate Instructions of the RTIM meetings

MTR of 9th NSEDP

SWG and SSWGs meetings

# RTIM Concept Note

Background
Objectives
Participation
Structure

# 2022 RTIM Format

- The **theme** of this year's RTIM 2022 is **accelerating the implementation of the 9th NSEDP (achievements of 2022 and plans for 2023), SDGs and achieving LDC graduation**
- RTIM will be **chaired by H.E. Mr. Khamjane Vongphosy**, Minister, Ministry of Planning and Investment and Ms. Sara Sekkenes, UN Resident Coordinator
- The RTIM will be held in hybrid format on **29 November 2022 at the National Convention Center with option to join online**

Deputy Ministers from all Line Ministries

Deputy Governors from all provinces and Vientiane Capital

All Ambassadors and Embassies accredited to Lao PDR

Representatives of international Development Partner agencies and organizations

Representatives of International NGOs and NPAs

Representatives of the private sector

# Six specific objectives of the 2022 RTIM

## Implementation progress of the 9th NSEDP and presentation of the final Financing Strategy

**1. Report** on implementation progress, challenges encountered, and efforts put in place to address them.

**2. Present** the final Financing Strategy and seek development partner support for its implementation.

**3. Discuss** how the Mid-term Review of 9th NSEDP will be carried out in 2023.

## Resilience Framework and LDC STS

**4. Present** the final draft Resilience Framework setting out immediate priority actions for 9th NSEDP implementation.

**5. Present** the draft LDC STS developed by Government to broader stakeholders, in anticipation of opportunities for more detailed feedback to be organized in December 2022.

## SWGs review

**6. Present** outcome of SWGs review and recommendations to strengthen alignment of coordination structures with national priorities.

# 9th NSEDP implementation and reporting progress & Mid-term Review

**Six Outcomes:**

1) Continuous quality, stable and sustainable economic growth achieved;

2) Improved quality of human resources to meet development, research capacity, science and technology needs, and create value-added production and services;

3) Enhanced well-being of the people;

4) Environmental protection enhanced and disaster risks reduced;

5) Engagement in regional and international cooperation and integration is enhanced with robust infrastructure and effective utilisation of national potentials and geographical advantages;

6) Public governance and administration is improved, and society is equal, fair and protected by effective rule of law


Lao People's Democratic Republic
Peace Independence Democracy Unity Prosperity

9TH FIVE-YEAR NATIONAL SOCIO-ECONOMIC DEVELOPMENT PLAN (2021-2025)

*(Approved by the Inaugural Session of the Ninth National Assembly on 22-26 March 2021 in accordance with the Resolution No. 20/NA, dated 26 March 2021)*

Vientiane Capital
March 2021

# 9th NSEDP Financing Strategy

The Financing Strategy is guided by the INFF approach, tailored to the Lao PDR context. Contains the following priority areas:

**1 Domestic public finance** (domestic revenue mobilisation, expenditure management and sustainable debt management)

**2 International public finance** (ODA predictability, efficiency, and effectiveness, accessing LDC specific funds until graduation)

**3 Domestic private finance** (business environment for MSME development, financial inclusion)

**4 International private finance** (foreign Direct Investments, illicit financial flows and remittances)

**5. Financing priority sectors** (health Finance, education Finance and green and climate finance)


THE 9TH NATIONAL SOCIO-ECONOMIC DEVELOPMENT PLAN FINANCING STRATEGY (2023-2025)

Government of Lao PDR

*With the technical assistance of the United Nations Joint Programme on Financing Efficiency, financed by the Joint SDG Fund, and the contributions of a broad coalition of development partners*

UNITED NATIONS LAO PDR

JOINT SDG FUND

# LDC Graduation Smooth Transition Strategy

**Objective:** identify and guide the steps necessary to ensure that graduation from the LDC category does not disrupt the country's development progress

## Four key thematic areas:

1. Financial resilience and sustainability
2. Economic transformation
3. Trade and connectivity
4. Climate change and disaster management

## Key thematic areas emerging from looking at the statistics



# Resilience Framework

**Objective:** Builds on the COVID-19 recovery framework presented at the 13th High Level Round Table Meeting and broadens Lao PDR's response to 'Building Back Better' in the current context of shocks.

## Pillars:

- Financing for Sustainable Development and Effective Development Cooperation (Macro-Fiscal Framework)
- Trade and Private Sector, Value Chains, and Tourism
- Manage Changes and enhance policy preparedness for decent work
- Human Capital
- Green Growth, Resilience and Risk Management
- Monitoring and Evaluation



*UPDATED DRAFT*

**RESILIENCE FRAMEWORK**

**2022-2025**

**Ministry of Planning and Investment**

Supported by the Multi-stakeholder Taskforce on COVID-19

**Submitted by:** Grace-Ann P. Cornwall, PhD

**Date of submission:** October 2022

| 2022 Roundtable Implementation Meeting Tentative Agenda | |
|---|---|
| **Time** | **Session** |
| 8:00-8:30 | Registration |
| 8:30-8:45 | Opening Remarks<br>*H.E. Mr. Khamjane Vongphosy, Minister of Planning and Investment* |
| 8:45-9:00 | Remarks<br>*Ms. Sara Sekkenes, UN Resident Coordinator* |
| 9:00-9:20 | Presentation on the achievements of the National Socio-Economic Development Plan (NSEDP) for 2022 and plan for 2023<br>*H.E. Mme. Phonevanh Outhavong, Vice Minister of Planning and Investment* |
| 9:20-9:50 | Open Discussion |
| 9:50-10:20 | Group Photo/ Coffee break |
| 10:20-10:40 | Presentation on the Final 9th NSEDP Financing Strategy<br>*H.E. Mme. Phonevanh Outhavong, Vice Minister of Planning and Investment* |
| 10:40-11:10 | Open discussion |
| 11:10-11:30 | Lao PDR Resilience Framework<br>*H.E. Dr. Sthabandith Insisienmay, Vice Minister of Planning and Investment* |
| 11:30-12:00 | Open discussion |
| 12:00-13:30 | Lunch |
| 13:30-13:50 | Presentation on the LDC Smooth Transition Strategy<br>*H.E Vice Minister of Foreign Affairs* |
| 13:50-14:20 | Open discussion |
| 14:20-14:40 | Presentation on the SWG Way Forward<br>*Vice Minister of Planning and Investment* |
| 14:40 -15:10 | Open discussion |
| 15:10-15:30 | Coffee Break |
| 15:30-15:50 | Remarks<br>*Ms. Sara Sekkenes, UN Resident Coordinator* |
| 15:50-16:00 | Closing Remarks<br>*H.E. Mr. Khamjane Vongphosy, Minister of Planning and Investment* |
| 16:`00-16:30 | Press Conference to Brief on the Outcomes of the 2022 RTIM by Chair and Co-Chair<br>*H.E. Mr. Khamjane Vongphosy, Minister of Planning and Investment*<br>*Ms. Sara Sekkenes, UN Resident Coordinator* |



# Thank you